# ເງິນເພີ້ມເຕີມສຳລັບການຊ່ວຍເຫລືອອາຫານສຸກເສີນ
## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ
## ຖືກດັດແປງແກ້ໄຂເດືອນໂນເວັມເບີ 2020

DSHS ກຳລັງເບີກການຊ່ວຍເຫລືອອາຫານເພີ້ມເຕີມໂດຍຜ່ານບັດ EBT ໃຫ້ຄອບຄົວທີ່ໄດ້ຮັບການຊ່ວຍເຫລືອຕ່ຳກວ່າຈຳນວນສູງສຸດສຳລັບຂະນາດຄອບຄົວຂອງເຂົາເຈົ້າ. ອັນນີ້ໄດ້ເລີ້ມຕົ້ນດ້ວຍການຊ່ວຍເຫລືອໃນເດືອນມາກຊ໌ ແລະ ເອໂປຣ ແລະຈະດຳເນີນຕໍ່ໄປໃນແບບເດືອນຕໍ່ເດືອນ.

**ເປັນຫຍັງອັນນີ້ຈຶ່ງເກີດຂຶ້ນ?**
ສະພາຕໍ່າໄດ້ອະນຸມັດການຊ່ວຍເຫລືອເພີ້ມເຕີມເພື່ອຈະເອົາໃຫ້ປະຊາຊົນຄວາມສາມາດທີ່ຈະຊື້ເອົາອາຫານເພີ້ມເຕີມ. ອັນນີ້ຈະລຸດຈຳນວນຂອງເວລາທີ່ຄົນເຮົາຕ້ອງການເພື່ອຈະໄປອອກຕະລາດຊື້ຂອງກິນ. ມັນຍັງຈະຈຳກັດຈຳນວນຄົນຢູ່ໃນຮ້ານອີກຄືກັນ ແລະ ລຸດຜ່ອນໂອກາດສຳລັບການສຳຜັດນຳພະຍາດ COVID-19.

**ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມເມື່ອໃດ?**
ວັນທີເບີກການຊ່ວຍເຫລືອສຳລັບໂຄງການອັນນີ້ອາດຈະແຕກຕ່າງກັນໄປໂດຍຂຶ້ນນຳການອະນຸມັດຂອງຣັດຖະບານກາງ ແລະ ຖ້າຫາກວ່າວັນທຳອິດຂອງເດືອນຕົກໃສ່ວັນອາທິດ. ອັນນີ້ຫມາຍຄວາມວ່າວັນໄວທີ່ສຸດທີ່ທ່ານຈະໄດ້ຮັບການຊ່ວຍເຫລືອແມ່ນວັນທີ 2nd ຂອງເດືອນ.

**ຂ້າພະເຈົ້າຫາກໍ່ໄດ້ຮ້ອງຂໍເອົາການຊ່ວຍເຫລືອອາຫານໃນເດືອນນີ້,ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມເມື່ອໃດ?**
ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານ, ທ່ານຈະໄດ້ຮັບຈຳນວນຂອງການຊ່ວຍເຫລືອສູງສຸດສຳລັບຂະນາດຂອງຄອບຄົວຂອງທ່ານ.

**ຂ້າພະເຈົ້າໄດ້ຮັບຈຳນວນຂອງການຊ່ວຍເຫລືອສູງສຸດແລ້ວ. ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມບໍ່?**
ຖ້າຫາກວ່າທ່ານໄດ້ຮັບຈຳນວນຂອງການຊ່ວຍເຫລືອສູງສຸດແລ້ວ, ທ່ານຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານເພີ້ມເຕີມອີກ.

**ຈຳນວນເງິນຂອງການຊ່ວຍເຫລືອສູງສຸດແມ່ນເທົ່າໃດ?**

| ສະມາຊິກຄອບຄົວທີ່ມີເງື່ອນໄຂໄດ້ຮັບ | ການຊ່ວຍເຫລືອສູງສຸດ |
|---|---|
| 1 | $204 |
| 2 | 374 |
| 3 | 535 |
| 4 | 680 |

| | |
|---|---|
| 5 | 807 |
| 6 | 969 |
| 7 | 1,071 |
| 8 | 1,224 |
| 9 | 1,377 |
| 10 | 1,530 |
| ແຕ່ລະຄົນ<br>ເພີ່ມເຕີມ | + 153 |

**ຂ້າພະເຈົ້າມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານ, ແຕ່ວ່າບໍ່ໄດ້ຮັບການຊ່ວຍເຫລືອຈັກແນວໃດ. ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມບໍ່?**
ແມ່ນ. ທ່ານຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມເປັນຈຳນວນເງິນສູງສຸດສຳລັບຂະນາດຂອງຄອບຄົວຂອງທ່ານຖ້າຫາກວ່າທ່ານຕາມປົກກະຕິແລ້ວໄດ້ຮັບ $0.

**ຂ້າພະເຈົ້າໄດ້ຮັບ WASHCAP/ການຊ່ວຍເຫລືອອາຫານຜັນປ່ຽນຕໍ່ມາ/ການຊ່ວຍເຫລືອອາຫານສຳລັບສະວັດດີການຂອງຄົນເຂົ້າເມືອງຖືກຕ້ອງຕາມກົດຫມາຍ.ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມບໍ່?**
ແມ່ນ. ການຊ່ວຍເຫລືອເພີ້ມເຕີມແມ່ນສຳລັບໂຄງການຊ່ວຍເຫລືອອາຫານທຸກໆຢ່າງ.

**ຂ້າພະເຈົ້າຈະໄດ້ຮັບການຊ່ວຍເຫລືອເພີ້ມເຕີມເປັນຈຳນວນເທົ່າໃດ?**
ທ່ານຈະໄດ້ຮັບຈຳນວນເງິນແຕກຕ່າງຣະຫວ່າງການຊ່ວຍເຫລືອຕາມປົກກະຕິຂອງທ່ານ ແລະ ຈຳນວນເງິນສູງສຸດສຳລັບຂະນາດຄອບຄົວຂອງທ່ານ. ຕົວຢ່າງວ່າ:

*ທ່ານ ແລະ ຂາຄູ່ຂອງທ່ານເຮັດວຽກທັງສອງຄົນ ແລະ ໄດ້ຮັບການຊ່ວຍເຫລືອອາຫານເປັນຈຳນວນທັງຫມົດ $200 ໃນເດືອນອົກໂຕເບີ 10. ສ່ວນແບ່ງສູງສຸດສຳລັບຄອບຄົວສອງຄົນແມ່ນ $374. $374 - $200 ແມ່ນ $174. ທ່ານຈະໄດ້ຮັບການຊ່ວຍເຫລືອສຸກເສີນເພີ້ມເຕີມເປັນຈຳນວນ $174. ທ່ານຈະໄດ້ຮັບການຊ່ວຍເຫລືອປົກກະຕິ $200 ຂອງທ່ານພ້ອມທັງຈຳນວນເພີ້ມເຕີມ $174 ເປັນຈຳນວນທັງຫມົດ $374 ໃນວັນທີຕາມປົກກະຕິຂອງທ່ານ,ເດືອນອົກໂຕເບີ 10.*

**ຂ້າພະເຈົ້າຈະຕ້ອງໄດ້ຈ່າຍເງິນຄືນສຳລັບການຊ່ວຍເຫລືອອັນນີ້ບໍ່?**
ການຊ່ວຍເຫລືອເພີ້ມເຕີມອັນນີ້ແມ່ນສຳລັບໃຫ້ທ່ານໃຊ້. ມັນບໍ່ມີເຫດຜົນແນວໃດທີ່ທ່ານຈະຕ້ອງໄດ້ຈ່າຍມັນຄືນ.

**ຂ້າພະເຈົ້າຈະສູນເສັຽການຊ່ວຍເຫລືອເພີ້ມເຕີມອັນນີ້ບໍ່ຖ້າຫາກວ່າຂ້າພະເຈົ້າບໍ່ໃຊ້ມັນໂດຍທັນທີໂລດ?**
ບໍ່. ທ່ານຈະຖືກອະນຸຍາດໃຫ້ມີເວລາ 365 ວັນຈາກວັນທີຂອງການເຄື່ອນໄຫວຖອນເງິນເທື່ອສຸດທ້າຍຂອງທ່ານທີ່ຈະໃຊ້ການຊ່ວຍເຫລືອເພີ້ມເຕີມ ແລະ ທັມມະດາ.

**ການຊ່ວຍເຫລືອເພີ້ມເຕີມອັນນີ້ຈະສະທ້ອນເຖິງສະພາບຂອງການເຂົ້າເມືອງຂອງຂ້າພະເຈົ້າບໍ່?**
ບໍ່.

Washington State
Department of Social
& Health Services
*Transforming lives*

**DSHS ຈະເບີກຈຳນວນເງິນສູງສຸດອອກໄປທຸກໆເດືອນຫລືບໍ່?**

ພວກເຮົາຈະກວດເບິ່ງຄືນຖ້າຫາກວ່າພວກເຮົາສາມາດເອົາຈຳນວນເງິນສູງສຸດໃຫ້ທ່ານສຳລັບຂະນາດຄອບຄົວຂອງທ່ານໃນແບບເດືອນຕໍ່ເດືອນ,ຂຶ້ນນຳການອະນຸມັດຂອງຣັດຖະບານກາງ.

**DSHS ຈະສົ່ງຫນັງສືມາຫາຂ້າພະເຈົ້າບໍ່ເມື່ອເວລາຂ້າພະເຈົ້າໄດ້ຮັບການຊ່ວຍເຫລືອເພີ້ມເຕີມ?**

ບໍ່. ພວກເຮົາບໍ່ສົ່ງຫນັງສືອອກໄປເມື່ອເວລາພວກເຮົາເບີກການຊ່ວຍເຫລືອເພີ້ມເຕີມອອກໄປ. ຖ້າຫາກວ່າທ່ານຢາກຮູ້ຈັກວ່າການຊ່ວຍເຫລືອຂອງທ່ານຈະຢູ່ໃນບັນຊີຂອງທ່ານເມື່ອໃດ, ທ່ານສາມາດໂທຫາເລກໂທຢູ່ໃນບັດ EBT ຂອງທ່ານເພື່ອຈະກວດເບິ່ງຈຳນວນເງິນຍັງເຫລືອຢູ່ ຫລື ໃຊ້ບັນຊີການຊ່ວຍເຫລືອລູກຄ້າຂອງທ່ານຢູ່ທີ່ www.washingtonconnection.org.

**ຂ້າພະເຈົ້າຄວນຈະໂທຫາສູນກາງຕິດຕໍ່ປະຊາສັມພັນບໍ່?**

ຍ້ອນປະຣິມານຂອງໂທຣະສັບເຂົ້າມາສູງເກີນກວ່າປົກກະຕິຂອງພວກເຮົາ, ພວກເຮົາຂໍຮ້ອງໃຫ້ທ່ານຢ່າສູ່ໂທເຂົ້າມາຖາມກ່ຽວກັບການຊ່ວຍເຫລືອເພີ້ມເຕີມ. ກວດເບິ່ງຣາຍຣະອຽດລ່າສຸດຢູ່ທາງບັນຊີຂ່າວສັງຄົມຂອງພວກເຮົາຢູ່ທາງ Facebook ແລະ Twitter ຫລື ຢູ່ທີ່ www.dshs.wa.gov.